**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 55 / **ສພຊ**

ນະຄອນຫຼວງວຽງຈັນ, ວັນທີ 08 / 07 / 22

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ
# ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນ ຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015 ມາດຕາ 53 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ;
- ອີງຕາມ ກົດໝາຍວ່າ ດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ປີ 2020 ມາດຕາ 60 ກ່ຽວກັບກອງປະຊຸມ ສະໄໝສາມັນປະຈຳ 6 ເດືອນຕົ້ນປີ ຂອງສະພາແຫ່ງຊາດ;
- ອີງຕາມ ບົດລາຍງານຂອງລັດຖະບານ, ລົງວັນທີ 13 ມິຖຸນາ 2022 ກ່ຽວກັບ ການຈັດຕັ້ງປະຕິບັດແຜນພັດ ທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນ ທ້າຍປີ 2022.

ຜ່ານການຮັບຟັງການລາຍງານ, ການຕິດຕາມກວດກາ ແລະ ການຄົ້ນຄວ້າ ປະກອບຄຳຄິດຄຳເຫັນຂອງກອງປະຊຸມສະພາແຫ່ງຊາດ ຢ່າງກວ້າງຂວາງ ແລະ ເລິກເຊິ່ງຕໍ່ບົດລາຍງານຂອງລັດຖະບານໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX,

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນ ຕົ້ນປີ 2022**

ກອງປະຊຸມເຫັນດີເປັນເອກະພາບຕໍ່ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນ ຕົ້ນປີ 2022 ແລະ ສະແດງຄວາມຊົມເຊີຍທີ່ ລັດຖະບານ ໄດ້ມີຄວາມພະຍາຍາມຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດວ່າດ້ວຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2022 ພາຍໃຕ້ເງື່ອນໄຂທີ່ສະພາບແວດລ້ອມຂອງສາກົນ ແລະ ພາກພື້ນໄດ້ມີການຜັນແປຢ່າງສະລັບຊັບຊ້ອນ ບວກກັບ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງປະເທດ ທີ່ໄດ້ສະສົມມາເປັນເວລາຫຼາຍປີ, ຊຶ່ງໄດ້ສົ່ງຜົນກະທົບ ແລະ ເປັນສິ່ງທ້າທາຍຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2022.

ຜ່ານການລາຍງານຂອງລັດຖະບານ ແລະ ການຕິດຕາມກວດກາຂອງສະພາແຫ່ງຊາດ ເຫັນວ່າ ລັດຖະບານສາມາດຜ່ານຜ່າຄວາມຫຍຸ້ງຍາກຫຼາຍຢ່າງ ແລະ ຍາດໄດ້ຜົນສຳເລັດທີ່ພົ້ນເດັ່ນໃນຫຼາຍຄາດໝາຍ ເປັນຕົ້ນ:

1) ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ເສດຖະກິດສືບຕໍ່ເຕີບໂຕຂະຫຍາຍຕົວ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;
2) ລວມຍອດຜະລິດຕະພັນພາຍໃນ (GDP) ເພີ່ມຂຶ້ນ 4,3% ຂອງແຜນການປີ (ມະຕິສະພາແຫ່ງຊາດ 4,5%);
3) ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ປະຕິບັດໄດ້ 21.864,87 ຕື້ກີບ ເທົ່າກັບ 74% ຂອງແຜນການປີ (ມະຕິສະພາແຫ່ງຊາດ 29.420 ຕື້ກີບ);
4) ການຜະລິດແຮ່ທາດ ປະຕິບັດໄດ້ 9.813 ຕື້ກີບ ເທົ່າກັບ 58,62% ຂອງແຜນການປີ (ມະຕິສະພາແຫ່ງຊາດ 16.741 ຕື້ກີບ);
5) ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ບັນລຸໄດ້ 6.683,60 ຕື້ກີບ ເທົ່າກັບ 51,38% ຂອງແຜນການປີ (ມະຕິສະພາແຫ່ງຊາດ 13.007 ຕື້ກີບ);
6) ມູນຄ່າຈໍລະຈອນສິນຄ້າ ບັນລຸໄດ້ 36.393 ຕື້ກີບ ເທົ່າກັບ 53,65% ຂອງແຜນການປີ (ມະຕິສະພາແຫ່ງຊາດ 67.833 ຕື້ກີບ);
7) ການສົ່ງອອກ-ນໍາເຂົ້າສິນຄ້າປະຕິບັດໄດ້ 106.914 ຕື້ກີບ ຫຼື ເທົ່າກັບ 7.280 ລ້ານໂດລາສະຫະລັດ (ອັດຕາແລກປ່ຽນ 14.686 ກີບ/ 1 ໂດລາສະຫະລັດ) ເທົ່າກັບ 53,33% ຂອງແຜນການປີ (ມະຕິສະພາແຫ່ງຊາດ 200.463 ຕື້ກີບ, ເທົ່າກັບ 13.650 ລ້ານໂດລາສະຫະລັດ);
8) ການຄ້າເກີນດຸນ 15.567 ຕື້ກີບ ຫຼື ເທົ່າກັບ 1.060 ລ້ານໂດລາສະຫະລັດ, ມູນຄ່າການສົ່ງອອກ 612.240 ຕື້ກີບ ຫຼື ເທົ່າກັບ 4.170 ລ້ານໂດລາສະຫະລັດ (ອັດຕາແລກປ່ຽນ 14.686 ກີບ/ 1 ໂດລາສະຫະລັດ), ມູນຄ່າການນໍາເຂົ້າ 456.734 ຕື້ກີບ ຫຼື ເທົ່າກັບ 3.110 ລ້ານໂດລາສະຫະລັດ;
9) ການຝຶກອົບຮົມ ແລະ ພັດທະນາສີມືແຮງງານໃນສາຂາວິຊາຊີບຕ່າງໆ ໄດ້ທັງໝົດ 6.816 ຄົນ ເທົ່າກັບ 85,20% ຂອງແຜນການປີ (ມະຕິສະພາແຫ່ງຊາດ 8.000 ຄົນ);
10) ຂົງເຂດວັດທະນະທໍາ-ສັງຄົມທີ່ພົ້ນເດັ່ນແມ່ນ ເຖິງວ່າພະຍາດໂຄວິດ-19 ຍັງສືບຕໍ່ແຜ່ລະບາດ, ແຕ່ລັດຖະບານສາມາດຊີ້ນໍາການຈັດຕັ້ງການຮຽນ-ການສອນແບບປົກກະຕິເຊິ່ງໜ້າ ແລະ ຜ່ານຮູບແບບທາງໄກ/ອອນລາຍ, ສາມາດເຝົ້າລະວັງ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ໂດຍໄດ້ເອົາໃຈໃສ່ສັກຢາວັກຊີນເຂັມທີ 1 ໄດ້ 79,6%, ເຂັມທີ 2 ໄດ້ 70,02% ທຽບໃສ່ປະຊາກອນທັງໝົດທົ່ວປະເທດ, ອັດຕາການປົກຄຸມປະກັນສັງຄົມ ມີທ່າອ່ຽງດີຂຶ້ນ; ການສ້າງບ້ານວັດທະນະທໍາ, ການໂຄສະນາ ແລະ ສະໜອງຂໍ້ມູນຂ່າວສານໃຫ້ສັງຄົມໄດ້ຮັບການຈັດຕັ້ງປະຕິບັດຢ່າງກວ້າງຂວາງ.

ຄຽງຄູ່ກັບຜົນສໍາເລັດທີ່ພົ້ນເດັ່ນດັ່ງກ່າວ, ກອງປະຊຸມເຫັນວ່າ ການຈັດຕັ້ງປະຕິບັດບາງຄາດໝາຍ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາປີ 2022 ໃນໄລຍະ 6 ເດືອນຕົ້ນປີ ຍັງມີຄວາມຄືບໜ້າໜ້ອຍ ແລະ ບາງຄາດໝາຍກໍຍັງມີຄວາມສ່ຽງທີ່ຈະບໍ່ບັນລຸຕາມມະຕິສະພາແຫ່ງຊາດ, ຊຶ່ງເປັນການຊີ້ບອກເຖິງຄວາມຍອບບາງຂອງເສດຖະກິດມະຫາພາກ, ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ຊີວິດການເປັນຢູ່ຂອງປະຊາຊົນຍັງຝືດເຄືອງ, ຊຶ່ງລັດຖະບານຕ້ອງເອົາໃຈໃສ່ສືບຕໍ່ຊຸກຍູ້ຈັດຕັ້ງປະຕິບັດບັນດາຄາດໝາຍ ດັ່ງກ່າວໃຫ້ບັນລຸຕາມແຜນ ເປັນຕົ້ນ:

1) ການປະຕິບັດຄາດໝາຍແຜນເງິນຕາ ເປັນຕົ້ນ ປະລິມານເງິນ M2 ຂະຫຍາຍຕົວໃນລະດັບ 13,31% ຂອງໄລຍະດຽວກັນຂອງປີຜ່ານມາ (ມະຕິສະພາແຫ່ງຊາດ: ຂະຫຍາຍຕົວບໍ່ເກີນ 22% ທຽບໃສ່ປີຜ່ານມາ), ກໍລະນີລວມການປ່ຽນແປງດ້ານອັດຕາແລກປ່ຽນ ແມ່ນຂະຫຍາຍຕົວ ເຖິງ 42,87% ທຽບໃສ່ໃນໄລຍະດຽວກັນຂອງປີຜ່ານມາ; ອັດຕາແລກປ່ຽນ ເງິນກີບ ທຽບເງິນ ໂດລາສະຫະລັດ ອ່ອນຄ່າ 12,12% ແລະ ທຽບເງິນບາດ ອ່ອນຄ່າ 12,66% (ມະຕິສະພາແຫ່ງຊາດ ±5%), ອັດຕາແລກປ່ຽນຢູ່ທະນາຄານ ແລະ ນອກລະບົບທະນາຄານ ສໍາລັບເງິນກີບທຽບເງິນໂດລາສະຫະລັດ ໂດຍສະເລ່ຍແຕກໂຕນ 10,81%, ເງິນກີບທຽບເງິນບາດ ໂດຍສະເລ່ຍແຕກໂຕນ 3,44%; ເຖິງວ່າຄັງສໍາຮອງເງິນຕາຕ່າງປະເທດ ສາມາດກຸ້ມການນໍາເຂົ້າ 3,63 ເດືອນ (ມະຕິສະພາແຫ່ງຊາດ ບໍ່ຫຼຸດ 3 ເດືອນ), ແຕ່ການສະໜອງເງິນຕາຕ່າງປະເທດຕົວຈິງ ໃຫ້ແກ່ການນໍາເຂົ້າສິນຄ້າອຸປະໂພກ-ບໍລິໂພກທີ່ຈໍາເປັນ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ເປັນຕົ້ນ ນໍ້າມັນເຊື້ອໄຟ ຍັງບໍ່ທັນຕອບສະ ໜອງໄດ້ຕາມຄວາມຕ້ອງການຊົມໃຊ້ຂອງສັງຄົມ; ອັດຕາເງິນເຟີ້ ສະເລ່ຍເພີ່ມຂຶ້ນ 11,4% (ມະຕິສະພາແຫ່ງຊາດ ບໍ່ເກີນ 5%) ແລະ ສະເພາະເດືອນ ມິຖຸນາ 23,6%, ໃນນີ້

ໝວດຄົມມະນາຄົມຂົນສົ່ງ 55,5%, ໝວດຮັກສາສຸຂະພາບ ແລະ ຢາ 27,5%, ໝວດອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ 16,9%;

2) ການປະຕິບັດຄາດໝາຍແຜນງົບປະມານ 6 ເດືອນຕົ້ນປີ ເຫັນວ່າຍັງມີຄວາມສ່ຽງທີ່ຈະບໍ່ບັນລຸຕາມແຜນປີ ເປັນຕົ້ນ:
   - ການຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດປະຕິບັດໄດ້ 43,35% ຂອງແຜນການປີ (ມະຕິສະພາແຫ່ງຊາດ 31.593 ຕື້ກີບ);
   - ປະຕິບັດລາຍຈ່າຍງົບປະມານໄດ້ພຽງແຕ່ 35,39% ຂອງແຜນການປີ (ມະຕິສະພາແຫ່ງຊາດ 34.691 ຕື້ກີບ);
3) ການປະຕິບັດຄາດໝາຍລະດົມແຫຼ່ງທຶນເພື່ອການພັດທະນາ ຍັງປະຕິບັດໄດ້ໜ້ອຍ, ເປັນຕົ້ນ ການຊ່ວຍເຫຼືອທາງການເພື່ອການພັດທະນາ ປະຕິບັດໄດ້ 1.677,06 ຕື້ກີບ ເທົ່າກັບ 24,85% ຂອງແຜນການປີ (ມະຕິສະພາແຫ່ງຊາດ 6.750 ຕື້ກີບ);
4) ການຂຶ້ນທະບຽນອອກໃບຕາດິນ ປະຕິບັດໄດ້ພຽງແຕ່ 32.706 ຕອນ ເທົ່າກັບ 10,9% ຂອງແຜນການປີ (ມະຕິສະພາແຫ່ງຊາດ 300.000 ຕອນ);
5) ການປະຕິບັດຄາດໝາຍສູ້ຊົນໃນຂົງເຂດວັດທະນະທຳ-ສັງຄົມ ໃນຫຼາຍຄາດໝາຍຍັງບໍ່ມີຄວາມຄືບໜ້າ ແລະ ມີຄວາມສ່ຽງທີ່ຈະບໍ່ສາມາດ ບັນລຸໄດ້ຕາມມະຕິສະພາແຫ່ງຊາດ ເປັນຕົ້ນ ອັດຕາການປະລະການຮຽນ, ວຽກງານໄພຊະນາການ, ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄູນງານຄວາມດີຕໍ່ປະເທດຊາດ, ການດຶງດູດນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ, ການສ້າງວຽກເຮັດງານທຳ ແລະ ການລຶບລ້າງຄວາມທຸກຍາກ.

**ມາດຕາ 2 ຮັບຮອງເອົາທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນທ້າຍປີ 2022**

ກອງປະຊຸມເຫັນດີຮັບຮອງເອົາທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນທ້າຍປີ 2022 ແລະ ແຜນວຽກຈຸດສຸມຕາມການສະເໜີຂອງລັດຖະບານ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນທ້າຍປີ 2022 ໃຫ້ບັນລຸໄດ້ຕາມແຜນປີ 2022, ກອງປະຊຸມສະເໜີໃຫ້ລັດຖະບານ ເອົາໃຈໃສ່ເພີ່ມເຕີມ ດັ່ງນີ້:

1. **ດ້ານທິດທາງລວມ**
   1) ຮັບປະກັນສະຖຽນລະພາບທາງດ້ານການເມືອງໃຫ້ໜັກແໜ້ນ, ເສດຖະກິດມະຫາພາກມີສະຖຽນລະພາບ ແລະ ໝັ້ນທ່ຽງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ປະຊາຊົນບັນດາເຜົ່າມີຄວາມສາມັກຄີເປັນປຶກແຜ່ນ;
   2) ຮັບປະກັນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມສົມດຸນ ລະຫວ່າງ ສາມເສົາຄ້ຳ ຂອງການພັດ ທະນາ: ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໂດຍຖືເອົາການພັດທະນາເສດຖະກິດເປັນໃຈກາງ, ການພັດທະນາສັງຄົມເປັນສິ່ງສຳຄັນ ແລະ ການປົກປັກຮັກສາສິ່ງແວດລ້ອມເປັນສິ່ງຈຳເປັນ;
   3) ເພີ່ມທະວີເອົາໃຈໃສ່ແກ້ໄຂບັນດາຈຸດອ່ອນ, ຂໍ້ຄົງຄ້າງ ແລະ ອຸປະສັກຕ່າງໆ, ຊຶ່ງເປັນຂອດອຸດຕັນ ແລະ ກີດຂວາງຕໍ່ການພັດທະນາໃນໄລຍະຜ່ານມາໃຫ້ມີຄວາມຄືບໜ້າ ແລະ ເປັນຮູບປະທຳຕົວຈິງ ໃຫ້ໄດ້ຫຼາຍຂຶ້ນ;
   4) ຊຸກຍູ້ສົ່ງເສີມວຽກຄົ້ນຄວ້າວິທະຍາສາດເຂົ້າໃນການຊຸດຄົ້ນ ແລະ ນຳໃຊ້ທ່າແຮງບົ່ມຊ້ອນພາຍໃນປະເທດ ແລະ ກາລະໂອກາດ ຂອງພາກພື້ນ ແລະ ສາກົນ ລວມທັງການຫັນວິກິດໃຫ້ເປັນໂອກາດ ເພື່ອພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາໃຫ້ ເກີດຜົນປະໂຫຍດສູງສຸດ.
2. **ດ້ານເປົ້າໝາຍລວມ**

   ກອງປະຊຸມຮັບຮອງ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດ 6 ເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມ ຕາມການລາຍງານຂອງລັດຖະບານ ຄື:
   1) ເຮັດໃຫ້ເສດຖະກິດຂະຫຍາຍຕົວ ຢ່າງຕໍ່ເນື່ອງ, ມີຄຸນນະພາບ ຕາມທິດສີຂຽວ ແລະ ຍືນຍົງ;
   2) ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ;
   3) ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນເທື່ອລະກ້າວ;
   4) ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ;

5) ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ການະໂອກາດດ້ານທີ່ຕັ້ງພູມມີສາດ ໃນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
6) ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ.

**3. ຕໍ່ຄາດໝາຍສູ້ຊົນ**

ກອງປະຊຸມສະເໜີລັດຖະບານສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍ 6 ເດືອນທ້າຍປີ ໃຫ້ບັນລຸຕາມແຜນການປະຈຳປີ ຕາມທີ່ໄດ້ກຳນົດໃນມະຕິຂອງກອງປະຊຸມສະພາແຫ່ງຊາດວ່າດ້ວຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2022.

**4. ຕໍ່ແຜນວຽກຈຸດສຸມ**

ກອງປະຊຸມຮັບຮອງ ແລະ ສະເໜີໃຫ້ລັດຖະບານສູ້ຊົນຈັດຕັ້ງປະຕິບັດແຜນວຽກຈຸດສຸມຕາມການລາຍງານຂອງລັດຖະບານ ດັ່ງນີ້:

1) ສຸມໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຕິດພັນກັບ 2 ວາລະແຫ່ງຊາດ ໃຫ້ມີຄວາມກົມກຽວ ແລະ ໃຫ້ໄປຕາມແຜນທີ່ກຳນົດໄວ້; ເລັ່ງຊຸກຍູ້ໃຫ້ທຸກຂະແໜງການໃນຂັ້ນສູນກາງ ແລະ ທ້ອງຖິ່ນ ເພີ່ມທະວີຄວາມເອົາໃຈໃສ່ຈັດຕັ້ງປະຕິບັດແຜນການຂອງຂະແໜງການຕົນເອງໃຫ້ເຂົ້າສູ່ລວງເລິກ, ເປັນຮູບປະທຳ ແລະ ໃຫ້ບັນລຸໄດ້ຕາມຄາດໝາຍທີ່ສະພາແຫ່ງຊາດໄດ້ກຳນົດໄວ້;
2) ເລັ່ງແກ້ໄຂສະພາບຄວາມຫຍຸ້ງຍາກດ້ານເສດຖະກິດມະຫາພາກ ໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ ໂດຍ ສຸມໃສ່ການຄຸ້ມຄອງອັດຕາແລກປ່ຽນເງິນຕາ, ລາຄາສິນຄ້າ ແລະ ອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບທີ່ສາມາດ ຄວບຄຸມໄດ້, ພ້ອມກັນນັ້ນ, ຕ້ອງສຸມໃສ່ແກ້ໄຂບັນຫາການສະໜອງນ້ຳມັນເຊື້ອໄຟໃຫ້ພຽງພໍ ດ້ວຍຫຼາຍມາດຕະການ ໂດຍຖືເອົາມາດຕະການເສດຖະກິດ ແລະ ຕາມກົນໄກຕະຫຼາດ ເປັນຕົ້ນຕໍ ໄປຄຽງຄູ່ກັບການສ້າງມາດຕະການແກ້ໄຂໃນໄລຍະກາງ ແລະ ໄລຍະຍາວ ເປັນສຳຄັນ;
3) ສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງ ເລກທີ 18/ນຍ ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼ ຂອງລາຍຮັບງົບປະມານ, ກົດໝາຍວ່າດ້ວຍປະຢັດ ແລະ ຕ້ານການຟຸມເຟືອຍ, ກົດໝາຍວ່າດ້ວຍລົດຂອງລັດ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງຕ່າງໆ ໃຫ້ເຂັ້ມງວດ ແລະ ເປັນຮູບປະທຳຫຼາຍຂຶ້ນ, ພ້ອມທັງສຸມ ໃສ່ກວດກາ-ຕິດຕາມການເກັບລາຍຮັບຈາກໂຄງການຂຸດຄົ້ນແຮ່ທາດໄລຍະທົດລອງ ເລີ່ມຈາກຂອດການ ຂຸດຄົ້ນ, ຂົນສົ່ງ ແລະ ຈຳໜ່າຍ;
4) ສືບຕໍ່ປັບປຸງປະສິດທິຜົນຂອງການລົງທຶນລັດໃຫ້ດີຂຶ້ນ, ຢຸດຕິການຈັດສັນທຶນໃສ່ໂຄງການໃໝ່ທີ່ບໍ່ມີປະສິດທິຜົນ ແລະ ສຸມໃສ່ໂຄງການລົງທຶນ ເພື່ອແກ້ໄຂຄວາມທຸກຍາກເປັນບູລິມະສິດ;
5) ສືບຕໍ່ແກ້ໄຂໜີ້ສິນສາທາລະນະໂດຍໄວ ໂດຍສະເພາະ ບັນຫາໜີ້ສິນຂອງລັດວິສາຫະກິດ ດ້ວຍຫຼາຍຮູບແບບ ລວມທັງການເຈລະຈາເລື່ອນການຊຳລະຕົ້ນທຶນ ແລະ ດອກເບ້ຍ, ຊອກຫາແຫຼ່ງກູ້ຢືມທີ່ມີດອກເບ້ຍຕ່ຳ, ຫຼຸດການສ້າງໜີ້ສິນໃໝ່ທີ່ບໍ່ຈຳເປັນ ແລະ ເດັດຂາດບໍ່ໃຫ້ຕົກເຂົ້າສູ່ສະພາບບໍ່ສາມາດຊຳລະໜີ້ສິນໄດ້;
6) ສືບຕໍ່ປະຕິຮູບບັນດາລັດວິສາຫະກິດ ລວມທັງບັນດາທະນາຄານທຸລະກິດລັດ ໃຫ້ເປັນຮູບປະທຳຫຼາຍຂຶ້ນ ໂດຍສະເພາະ ຫົວໜ່ວຍລັດວິສາຫະກິດທີ່ໄດ້ ກຳນົດໃນແຜນການປະຕິຮູບຂອງລັດຖະບານ;
7) ເລັ່ງປັບປຸງກົນໄກອຳນວຍຄວາມສະດວກໃນການດຳເນີນທຸລະກິດ ແລະ ສົ່ງເສີມການລົງທຶນ ໃຫ້ດີຂຶ້ນພ້ອມທັງເລັ່ງຊຸກຍູ້ ແລະ ສົ່ງເສີມບັນດາໂຄງການລົງທຶນຂອງຕ່າງປະເທດທີ່ໄດ້ອະນຸມັດແລ້ວ ໃຫ້ສາມາດຈັດຕັ້ງປະຕິບັດໃຫ້ສຳເລັດໂດຍໄວ. ໃນເວລາດຽວກັນ, ເລັ່ງກວດກາ-ຕິດຕາມຄືນ ບັນດາໂຄງການລົງທຶນ ທີ່ມີສັນຍາຊຳລະໜີ້ສິນຕ່າງປະເທດໃກ້ຈະສິ້ນສຸດ ແລະ ເລີ່ມມີຜົນກຳໄລ ເພື່ອຊຸກຍູ້ໃຫ້ມີການນຳເຂົ້າເງິນຕາຕ່າງປະເທດເຂົ້າສູ່ເສດຖະກິດພາຍໃນໃຫ້ໄວຂຶ້ນ;
8) ສືບຕໍ່ປັບປຸງຄວາມພ້ອມໃນດ້ານຕ່າງໆ ເພື່ອຮອງຮັບການເປີດປະເທດ ໂດຍສະເພາະ ເລັ່ງແກ້ໄຂບັນດາຂໍ້ຫຍຸ້ງຍາກ ແລະ ຂັ້ນຕອນໃນການເຂົ້າ-ອອກປະເທດ; ປັບປຸງຄຸນນະພາບການບໍລິການໃນຂະແໜງ ການທ່ອງທ່ຽວເພື່ອຕ້ອນຮັບບັນດານັກທ່ອງທ່ຽວຈາກພາຍໃນ ແລະ ຕ່າງປະເທດ ທີ່ຄາດວ່າຈະເພີ່ມຂຶ້ນໃນຕໍ່ໜ້າ. ກວດກາ ແລະ ຮັບປະກັນການສະໜອງຢາສັກປ້ອງກັນພະຍາດໂຄວິດ-19 ໃຫ້ພຽງພໍ, ພ້ອມທັງເລັ່ງຂະຫຍາຍອັດຕາການປົກຫຸ້ມການສັກຢາປ້ອງກັນພະຍາດໂຄວິດ-19 ໂດຍສະເພາະ ເຂັມ 3 ແລະ ເຂັມ 4 ໃຫ້ເພີ່ມຂຶ້ນ;

9) ດຳເນີນການປະເມີນການເອົາຄະແນນສະສົມໃຫ້ນັກຮຽນເພື່ອເລື່ອນຊັ້ນ ແລະ ກະກຽມສອບເສັງຈົບຊັ້ນໃຫ້ແກ່ນັກຮຽນ-ນັກສຶກສາ ໃຫ້ມີຄຸນນະພາບ, ຝຶກອົບຮົມໃຫ້ແກ່ຄູ-ອາຈານໃນໄລຍະສິ້ນປີຮຽນ; ຈັດຕັ້ງການຮຽນ-ການສອນໃຫ້ຄົບຕາມຫຼັກສູດ, ສູ້ຊົນປະຕິບັດຄາດໝາຍທີ່ຄາດວ່າຈະບໍ່ບັນລຸຕາມແຜນການດ້ວຍການສືບຕໍ່ປັບປຸງ ແລະ ພັດທະນາຫຼັກສູດການຮຽນ-ການສອນ, ພ້ອມທັງສະໜອງໂຄງລ່າງພື້ນຖານ ແລະ ສື່ການຮຽນ-ການສອນ;

10) ເລັ່ງແກ້ໄຂສະພາບຫວ່າງງານ ໂດຍເອົາໃຈໃສ່ເກັບກຳ ແລະ ສຳຫຼວດຂໍ້ມູນກ່ຽວກັບຄວາມຕ້ອງການ ແຮງງານໃນແຕ່ລະສາຍອາຊີບ ເພື່ອຈັດສັນແຮງງານເຂົ້າສູ່ການຈ້າງງານໂດຍໄວ. ພ້ອມນັ້ນ, ຊຸກຍູ້ແຮງງານ ເຂົ້າສູ່ລະບົບປະກັນສັງຄົມໃຫ້ໄດ້ຢ່າງກວ້າງຂວາງ;

11) ສືບຕໍ່ຈັດຕັ້ງປະຕິບັດແນວທາງ ປກຊ-ປກສ ທົ່ວປວງຊົນຮອບດ້ານ ໃຫ້ເຂັ້ມແຂງກວ່າເກົ່າ;

12) ເອົາໃຈໃສ່ຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ ແລະ ເຊື່ອມໂຍງສາກົນ ຢ່າງສະເໝີຕົ້ນສະເໝີປາຍ ແລະ ເປັນເຈົ້າການ ຫາແຫຼ່ງອີງການສະໜັບສະໜູນ ແລະ ຊ່ວຍເຫຼືອຂອງສາກົນ ມາພັດທະນາເສດຖະກິດ-ສັງຄົມຂອງປະເທດ. ອັນພິເສດ ສືບຕໍ່ຊີ້ນຳການສ້າງຂະບວນການຮອບດ້ານ ເພື່ອຈັດຕັ້ງສະເຫຼີມສະຫຼອງສອງວັນປະຫວັດສາດ ລະຫວ່າງລາວ-ຫວຽດນາມ ໃຫ້ເປັນຂະບວນການຟົດຟື້ນ.

## ມາດຕາ 3 ມາດຕະການຈັດຕັ້ງປະຕິບັດ

ກອງປະຊຸມເຫັນດີຮັບຮອງມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນທ້າຍປີ 2022 ຕາມການສະເໜີຂອງລັດຖະບານ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ບັນລຸຕາມຄາດໝາຍ ຕາມແຜນການປະຈຳປີ 2022 ທີ່ກຳນົດໄວ້, ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ບາງມາດຕະການ ເພີ່ມເຕີມ ດັ່ງນີ້:

1. ເອົາໃຈໃສ່ຄົ້ນຄວ້ານະໂຍບາຍ ແລະ ກຳນົດມາດຕະການໃຫ້ຈະແຈ້ງກ່ຽວກັບການຈັດຕັ້ງປະຕິບັດການດຸນດ່ຽງເສດຖະກິດມະຫາພາກໃຫ້ມີຄວາມສົມດຸນ ເປັນຕົ້ນ:
   1) ເອົາໃຈໃສ່ຄຸ້ມຄອງປະລິມານເງິນ M2 ເພື່ອພັດທະນາເສດຖະກິດ-ສັງຄົມ ໃຫ້ມີການເຕີບໂຕສົມດຸ່ນກັບການເພີ່ມຂຶ້ນຂອງບໍລິມາດເງິນ ພ້ອມທັງຮັບປະກັນການຄຸ້ມຄອງ ເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ໄດ້ກຳນົດໃນມະຕິສະພາແຫ່ງຊາດ ດ້ວຍການປະຕິບັດມາດຕະການຊຸກຍູ້ສົ່ງເສີມການຜະລິດ ພາຍໃນ ເພື່ອຕອບສະໜອງການຊົມໃຊ້ຂອງສັງຄົມ, ທົດແທນການນຳເຂົ້າ ແລະ ສົ່ງອອກ;
   2) ເອົາໃຈໃສ່ຄຸ້ມຄອງການດຸນດ່ຽງການຊຳລະສະສາງເງິນຕາກັບຕ່າງປະເທດ ດ້ວຍການເອົາໃຈໃສ່ຄຸ້ມຄອງ ກະແສເງິນຕາເຂົ້າ-ອອກ ປະເທດ, ເປັນຕົ້ນ ຄຸ້ມຄອງ ເງິນລົງທຶນຈາກໂຄງການລົງທຶນຈາກຕ່າງປະເທດ, ລາຍຮັບ ແລະ ການຊຳລະເປັນເງິນຕາ ຈາກການນຳເຂົ້າ-ສົ່ງອອກ ໃຫ້ຄົບຖ້ວນ, ການນຳໃຊ້ເງິນກີບ ເພື່ອຊຳລະສະສາງພາຍໃນປະເທດ ໃຫ້ເຂົ້າສູ່ລະບົບທະນາຄານຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ;
   3) ເອົາໃຈໃສ່ຄົ້ນຄວ້າລະດົມທຶນຈາກບັນດາພາກສ່ວນເສດຖະກິດພາຍໃນ ແລະ ຕ່າງປະເທດ ເປັນຕົ້ນ ການສົ່ງເສີມການພັດທະນາຕະຫຼາດຮຸ້ນ, ການນຳໃຊ້ກອງທຶນຕ່າງໆ ເຊັ່ນ: ກອງທຶນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ກອງທຶນປະກັນສັງຄົມ ເພື່ອດຸນດ່ຽງບັນດາແຫຼ່ງທຶນໃຫ້ພຽງພໍກັບຄວາມຕ້ອງການພັດທະນາ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ບັນລຸຕາມແຜນການ;
   4) ເອົາໃຈໃສ່ສ້າງແຜນການ ແລະ ມາດຕະການ ກ່ຽວກັບການຈັດຫາແຫຼ່ງທຶນ ດຸນດ່ຽງງົບປະມານແຫ່ງລັດໃຫ້ຈະແຈ້ງ ເພື່ອຮັບປະກັນ ການປະຕິບັດແຜນລາຍຈ່າຍງົບປະມານຂອງລັດ ເປັນຕົ້ນ ການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ໃຫ້ໄປຕາມແຜນ;
   5) ເອົາໃຈໃສ່ຄົ້ນຄວ້າ ແລະ ກຳນົດຄວາມຕ້ອງການຊົມໃຊ້ສິນຄ້າຢູ່ພາຍໃນປະເທດ ທີ່ຈຳເປັນຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ແຫຼ່ງສະໜອງສິນຄ້າພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນການດຸນດ່ຽງການສະໜອງ ແລະ ຄວາມຕ້ອງການ ສິນຄ້າທີ່ຈຳເປັນ ຂອງປະຊາຊົນກໍຄືຜູ້ບໍລິໂພກໃຫ້ມີຄວາມໝັ້ນຄົງ ແລະ ເຂັ້ມແຂງຂຶ້ນ ເປັນຕົ້ນ ນ້ຳມັນເຊື້ອໄຟ, ສະບຽງອາຫານ ແລະ ປັດໃຈການຜະລິດ;
   6) ເອົາໃຈໃສ່ຄົ້ນຄວ້າ ແລະ ກຳນົດຄວາມຕ້ອງການແຮງງານ, ການພັດທະນາສີມືແຮງງານລາວ ເພື່ອຕອບສະໜອງແຮງງານໃຫ້ພຽງພໍຕາມຄວາມຕ້ອງການຂອງການພັດທະນາ ໂດຍສະເພາະ ໂຄງການລົງທຶນຂະໜາດໃຫຍ່, ເຂດ

ເສດຖະກິດພິເສດ, ເອົາໃຈໃສ່ແກ້ໄຂບັນຫາການຫວ່າງງານດ້ວຍການຄົ້ນຄວ້ານະໂຍບາຍສົ່ງເສີມການສ້າງວຽກເຮັດງານທໍາໃຫ້ປະຊາຊົນລາວ ລວມທັງແຮງງານພັດທະນາເສດຖະກິດຄອບຄົວໃຫ້ຫຼາຍຂຶ້ນ ເພື່ອຮັບປະກັນການດຸນດ່ຽງແຮງງານຂອງຕະຫຼາດແຮງງານພາຍໃນ;

2. ເອົາໃຈໃສ່ປະຕິບັດ 2 ວາລະແຫ່ງຊາດໃຫ້ເປັນບຸລິມະສິດຂອງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີຄວາມຄືບໜ້າ ແລະ ບັນລຸຄາດໝາຍຕົ້ນຕໍຂອງວາລະແຫ່ງຊາດຕາມທີ່ໄດ້ກໍານົດໃນມະຕິສະພາແຫ່ງຊາດ ສະບັບເລກທີ 03/ສພຊ ແລະ 04/ສພຊ, ລົງວັນທີ 10 ສິງຫາ 2021;
3. ເອົາໃຈໃສ່ຄົ້ນຄວ້າວິທີການ ແລະ ມາດຕະການ ໃນການກະກຽມແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປີ 2023 ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ເປັນຕົ້ນ ການສະເໜີບັນຊີໂຄງການລົງທຶນຂອງລັດ ປະຈໍາປີ 2023 ໃຫ້ທັນຮັບຮອງ ຢູ່ກອງປະຊຸມ ສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ສໍາລັບການຈັດສັນງົບປະມານໃຫ້ໂຄງການທີ່ມີມູນຄ່າຕໍ່າກວ່າ 20 ຕື້ກີບລົງມາ ມອບໃຫ້ ສະພາປະຊາຊົນຂັ້ນແຂວງລົມທຶບກັບອົງການປົກຄອງທ້ອງຖິ່ນພິຈາລະນາຮັບຮອງ;
4. ເອົາໃຈໃສ່ ສືບຕໍ່ຈັດຕັ້ງປະຕິບັດແຜນການແບ່ງເຂດ ການຜະລິດກະສິກໍາ, ອຸດສາຫະກໍາ, ການບໍລິການ ແລະ ການທັບເປັນຕົວເມືອງ ໃຫ້ສໍາເລັດໂດຍໄວ, ໂດຍຕິດພັນກັບການປະເມີນຄືນໂຄງປະກອບເສດຖະກິດ ໃນເງື່ອນໄຂແຫ່ງການເຊື່ອມໂຍງທາງດ້ານເສດຖະກິດກັບພາກພື້ນ ແລະ ສາກົນ ເພື່ອກະກຽມລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ໃນຄັ້ງຕໍ່ໄປ;
5. ເອົາໃຈໃສ່ ຊີ້ນໍາບັນດາກະຊວງທີ່ກ່ຽວຂ້ອງ ແລະ ຂະແໜງການທີ່ກ່ຽວຂ້ອງ ອໍານວຍຄວາມສະດວກໃຫ້ແກ່ຜູ້ປະກອບການໄດ້ເຂົ້າເຖິງແຫຼ່ງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອເປັນການຊຸກຍູ້ສົ່ງເສີມໃຫ້ ຜູ້ປະກອບການຂະໜາດນ້ອຍ-ກາງ ໃຫ້ມີຄວາມເຂັ້ມແຂງ;
6. ຮີບຮ້ອນ ຄົ້ນຄວ້າ ກໍານົດບັນຊີລາຍການປະເພດສິນຄ້າກະສິກໍາ ເພື່ອສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນໍາເຂົ້າ ແລະ ສົ່ງອອກ ດັ່ງນີ້:
   - **ສົ່ງເສີມການຜະລິດ ເພື່ອທົດແທນການນໍາເຂົ້າ:**

     ຄົ້ນຄວ້າກໍານົດນະໂຍບາຍສົ່ງເສີມຜະລິດປັດໃຈການຜະລິດ ເພື່ອທົດແທນການນໍາເຂົ້າ ເປັນຕົ້ນ:

     1) ຝຸ່ນເພື່ອຕອບສະໜອງໃຫ້ແກ່ການຜະລິດກະສິກໍາ ເຊັ່ນ: ຝຸ່ນຊີວະພາບ, ຝຸ່ນອົງຄະທາດ, ຝຸ່ນເຄມີ ແລະ ຝຸ່ນສັງເຄາະ, ຊຸກຍູ້ຜະລິດ ຝຸ່ນຊີວະພາບ, ຝຸ່ນອົງຄະທາດ, ຝຸ່ນເຄມີ ແລະ ຝຸ່ນສັງເຄາະ ສາມາດຕອບສະໜອງ ບໍ່ຫຼຸດ 50% ແລະ ອາຫານສັດ ບໍ່ຫຼຸດ 70% ຂອງຄວາມຕ້ອງການພາຍໃນປະເທດ ໃນປີ 2023;
     2) ແນວພັນພືດ ແລະ ແນວພັນສັດ;
     3) ພາຫະນະ, ອຸປະກອນ, ກົນຈັກ ຮັບໃຊ້ການຜະລິດ;
     4) ຜະລິດຕະພັນກະສິກໍາ ເພື່ອທົດແທນການນໍາເຂົ້າ ເປັນຕົ້ນ ສະບຽງອາຫານ, ພະລັງງານທົດແທນ.
   - **ສົ່ງເສີມການຜະລິດ ເພື່ອສົ່ງອອກ:**

     ຄົ້ນຄວ້າກໍານົດປະເພດສິນຄ້າ ແລະ ຊຸກຍູ້ສົ່ງເສີມການຜະລິດ ທີ່ມີທ່າແຮງ ເພື່ອສົ່ງອອກ ແລະ ມີສັນຍາການຄ້າກັບຕ່າງປະເທດ ເປັນຕົ້ນ: ປາງພາລາ, ເຂົ້າ, ສາລີ, ໝາກໄມ້, ຜັກ, ກາເຟ, ມັນຕົ້ນ, ອ້ອຍ, ສັດລ້ຽງ;
7. ເອົາໃຈໃສ່ຈັດສັນເຂດການຜະລິດຢ່າງມີຈຸດສຸມ ຕາມເງື່ອນໄຂທ່າແຮງ ຂອງແຕ່ລະທ້ອງຖິ່ນ ພ້ອມທັງກວດກາ ແລະ ປັບປຸງຄືນລະບົບຊົນລະປະທານໃຫ້ຮັບປະກັນໄດ້ ການຕ້ານຖ້ວມ, ຕ້ານແລ້ງ ໃຫ້ມີປະສິດທິພາບ, ປະສິດທິຜົນ; ເອົາໃຈໃສ່ຊຸກຍູ້ສົ່ງເສີມ ການເຂົ້າເຖິງແຫຼ່ງທຶນ ແລະ ສິນເຊື່ອ ເພື່ອຮັບປະກັນໃຫ້ແກ່ການຜະລິດກະສິກໍາໃຫ້ທັນລະດູການ ແລະ ບັນລຸຕາມແຜນການ;
8. ຊຸກຍູ້ ສົ່ງເສີມການຜະລິດກະສິກໍາ ຕິດພັນກັບການປຸງແຕ່ງ ໃຫ້ມີຄວາມຫຼາກຫຼາຍທາງດ້ານຜະລິດຕະພັນ, ຮັບປະກັນ ຄຸນນະພາບ, ປະລິມານ, ການຫຸ້ມຫໍ່, ໂພສະນາການ ແລະ ອື່ນໆ; ຄຸ້ມຄອງສິນຄ້ານໍາເຂົ້າ ໄປຄຽງຄູ່ກັບການປຸກຈິດສໍານຶກ, ຊຸກຍູ້ສົ່ງເສີມ ທົ່ວສັງຄົມ ໃຫ້ຫັນມານໍາໃຊ້ ຜະລິດຕະພັນ ແລະ ສິນຄ້າ ທີ່ຜະລິດຢູ່ພາຍໃນປະເທດ ໃຫ້ຫຼາຍຂຶ້ນ ເພື່ອຫຼຸດຜ່ອນການນໍາເຂົ້າ;

9. ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດຂໍ້ຕົກລົງ ວ່າດ້ວຍການສ້າງຄັງແຮເຂົ້າແຫ່ງຊາດ ສະບັບເລກທີ 96/ນຍ, ລົງວັນທີ 23 ກັນຍາ 2008 ພ້ອມທັງຮີບຮ້ອນຄົ້ນຄວ້າປັບປຸງຍົກລະດັບຂໍ້ຕົກລົງດັ່ງກ່າວ ເປັນດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍຄັງແຮເຂົ້າແຫ່ງຊາດ ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ;
10. ຄົ້ນຄວ້າ ກໍານົດຍຸດທະສາດພັດທະນາພະລັງງານນໍ້າມັນເຊື້ອໄຟ ແລະ ນະໂຍບາຍການສົ່ງເສີມດຶງດູດການລົງທຶນ ໃນກິດຈະການໂຮງງານກັ່ນນໍ້າມັນເຊື້ອໄຟ ໄປຄຽງຄູ່ກັບການຄົ້ນຄວ້າປັບປຸງ ໂຮງງານກັ່ນນໍ້າມັນ, ລະບົບສາງເກັບນໍ້າມັນທີ່ມີແລ້ວ ໃຫ້ໄດ້ມາດຕະຖານ ແລະ ຄຸນນະພາບ ເພື່ອຮັບປະກັນການສະໜອງນໍ້າມັນເຊື້ອໄຟ ແລະ ບັນດາຜະລິດຕະພັນທີ່ຕິດພັນ ເຊັ່ນ ນໍ້າມັນຫຼໍ່ລື່ນ, ນໍ້າມັນສັງເຄາະ ແລະ ຢາງປູທາງ ໃຫ້ແກ່ການຊົມໃຊ້ພາຍໃນໃຫ້ນັບມື້ນັບຫຼາຍຂຶ້ນ ພ້ອມທັງ ຄົ້ນຄວ້າທ່າແຮງບົ່ມຊ້ອນການຜະລິດພະລັງງານທົດແທນ ຈາກແຫຼ່ງຜະລິດທີ່ມີທ່າແຮງ ເປັນຕົ້ນ ຈາກຜະລິດຕະພັນກະສິກໍາ, ພະລັງງານແສງອາທິດ, ພະລັງງານລົມ, ສິ່ງເສດເຫຼືອ ແລະ ອື່ນໆ; ຮີບຮ້ອນ ຊຸກຍູ້ສົ່ງເສີມການນໍາໃຊ້ ລົດໄຟຟ້າ ໃຫ້ຫຼາຍຂຶ້ນ ພ້ອມທັງ ຄົ້ນຄວ້າອອກນິຕິກໍາ ກ່ຽວກັບກົນໄກການຄຸ້ມຄອງ ແລະ ນໍາໃຊ້ ໃຫ້ຮັບປະກັນ ຄວາມປອດໄພ ແລະ ການບໍລິການ ຂອງຜູ້ຊົມໃຊ້;
11. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນິຕິກໍາ ກ່ຽວກັບການຄຸ້ມຄອງ ທ່າບົກ ໃຫ້ມີຄວາມເປັນເອກະພາບ; ຮີບຮ້ອນ ສ້ອມແປງເສັ້ນທາງຫຼວງ ທີ່ເປ່ເພຈາກໂຄງການກໍ່ສ້າງທາງລົດໄຟ, ທາງດ່ວນ ແລະ ໂຄງການຂຸດຄົ້ນບໍ່ແຮ່ຕ່າງໆ; ຄົ້ນຄວ້າ ຈັດແບ່ງງົບປະມານກອງທຶນທາງ ໃຫ້ແຕ່ລະແຂວງ ໃຫ້ມີຄວາມເໝາະສົມ ເພື່ອຮັບປະກັນໃຫ້ແກ່ການສ້ອມແປງເສັ້ນທາງ ທີ່ຕ້ອງຖືກຄຸ້ມຄອງ; ຮີບຮ້ອນຄົ້ນຄວ້າການຊົດເຊີຍໃຫ້ປະຊາຊົນຜູ້ທີ່ຖືກຜົນກະທົບ ຈາກໂຄງການລົງທຶນຂອງລັດ ເປັນຕົ້ນ ໂຄງການກໍ່ສ້າງ ທາງລົດໄຟ, ທາງດ່ວນ ແລະ ທ່າບົກ ໃຫ້ສໍາເລັດໂດຍໄວ;
12. ສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍຂະແໜງສຶກສາທິການ ແລະ ກິລາ ເປັນຕົ້ນ ປັບປຸງເງື່ອນໄຂດ້ານຕ່າງໆເພື່ອໃຫ້ສາມາດຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ, ສືບຕໍ່ປັບປຸງ ແລະ ພັດທະນາຫຼັກສູດການຮຽນ-ການສອນ, ສະໜອງພື້ນຖານໂຄງລ່າງ, ສື່ການຮຽນ-ການສອນ, ຝຶກອົບຮົມຄູ-ອາຈານ ແລະ ປຸກລະດົມນັກຮຽນທີ່ປະລະການຮຽນໃຫ້ກັບຄືນມາຮຽນ; ເອົາໃຈໃສ່ພັດທະນາແມ່ຍິງ, ໄວໜຸ່ມ ໃຫ້ມີຄວາມຮູ້ຄວາມສາມາດເພື່ອປະກອບອາຊີບທີ່ໝັ້ນຄົງ, ສົ່ງເສີມຄວາມກ້າວໜ້າແມ່ຍິງ ແລະ ຄວາມສະເໝີພາບຍິງ-ຊາຍ ແລະ ການປົກປ້ອງສິດທິເດັກ;
13. ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍຂະແໜງສາທາລະນະສຸກ ເປັນຕົ້ນ ສຸມໃສ່ໂຄສະນາເຜີຍແຜ່ ວຽກງານສຸຂະສຶກສາ, ສຸຂາອະນາໄມ, ໂພຊະນາການໃຫ້ກວ້າງຂວາງ ແລະ ທົ່ວເຖິງ, ສົ່ງເສີມວຽກງານຮັກສາສຸຂະພາບຂັ້ນຕົ້ນ ໃນຊຸມຊົນໃຫ້ມີ ຄຸນນະພາບ, ທົ່ວເຖິງ ແລະ ຍືນຍົງ; ເອົາໃຈໃສ່ປັບປຸງ ຄຸນນະພາບການບໍລິການ, ຈັນຍາບັນຂອງແພດໝໍ, ເປັນເຈົ້າການ ຄວບຄຸມ, ເຝົ້າລະວັງ ແລະ ສະກັດກັ້ນ ການແຜ່ລະບາດຂອງ ພະຍາດໂຄວິດ-19, ພະຍາດຕາມລະດູການ ແລະ ພະຍາດອື່ນໆ ທີ່ອາດຈະເກີດຂຶ້ນໃຫ້ມີປະສິດທິຜົນ; ເອົາໃຈໃສ່ ຮັບປະກັນລະບົບ ປະກັນສຸຂະພາບ ທົ່ວປວງຊົນໃຫ້ເຂັ້ມແຂງ ແລະ ຍືນຍົງ, ໂດຍສະເພາະ ການຮັບປະກັນການປະກອບສ່ວນ ເບ້ຍປະກັນຂອງຜູ້ປະກັນຕົນ;
14. ເອົາໃຈໃສ່ປຸກລະດົມທົ່ວສັງຄົມປະກອບສ່ວນບໍລິຈາກເລືອດ ໃຫ້ໄດ້ຕາມແຜນການ, ຮີບຮ້ອນສ້າງນິຕິກໍາກ່ຽວກັບກອງທຶນເລືອດ, ກອງທຶນຊ່ວຍເຫຼືອສຸກເສີນ ລວມທັງຂະຫຍາຍອາສາສະໝັກກາແດງ ໃນຂອບເຂດທົ່ວປະເທດ ເພື່ອປະກອບສ່ວນເຂົ້າໃນວຽກງານມະນຸດສະທໍາ ໃຫ້ມີປະສິດທິຜົນ;
15. ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງ, ສະຖານທີ່ທ່ອງທ່ຽວ ແລະ ການບໍລິການໃຫ້ໄດ້ມາດຕະຖານ, ປັບປຸງການໂຄສະນາການທ່ອງທ່ຽວໃນການເປີດປະເທດ ເພື່ອຮັບປະກັນການເປີດການທ່ອງທ່ຽວຢ່າງເຕັມຮູບແບບ ພ້ອມທັງຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ແລະ ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ບໍ່ທັນສໍາເລັດໃຫ້ບັນລຸຕາມຄາດໝາຍແຜນການທີ່ວາງໄວ້;
16. ເອົາໃຈໃສ່ ປະເມີນ ຄວາມຄືບໜ້າ ແລະ ສືບຕໍ່ເອົາໃຈໃສ່ປະຕິບັດວຽກຈຸດສຸມພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າໃນເຂດຈຸດສຸມ ແລະ ເມືອງເປົ້າໝາຍ ທີ່ໄດ້ກໍານົດ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້;
17. ເອົາໃຈໃສ່ຈັດຕັ້ງປະຕິບັດແນວທາງ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ໃຫ້ເຂັ້ມແຂງກວ່າເກົ່າ ດ້ວຍການເພີ່ມທະວີໂຄສະນາເຜີຍແຜ່ ກົດໝາຍ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;

18. ເພີ່ມທະວີການພົວພັນຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ ແລະ ການສະໜັບສະໜູນຈາກບັນດາ ປະເທດເພື່ອນມິດຍຸດທະສາດ, ປະເທດເພື່ອນບ້ານໃກ້ຄຽງ, ປະເທດເພື່ອນມິດໃນໂລກ ເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ແລະ ຍົກສູງຖານະບົດບາດຂອງປະເທດເຮົາ ໃຫ້ພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ. ພ້ອມກັນນີ້, ເປັນເຈົ້າການໃນການ ຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນການຊ່ວຍເຫລືອ ແລະ ໂຄງການລົງທຶນຈາກຕ່າງປະເທດ ໃຫ້ມີປະສິດທິຜົນສູງສຸດ; ຊຸກຍູ້, ຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໃນຂົງເຂດເສດຖະກິດ, ການຄ້າ ແລະ ການລົງທຶນ;
19. ເອົາໃຈໃສ່ການຄຸ້ມຄອງບໍລິຫານລັດ ແລະ ແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນທຸກຂົງເຂດຂອງສັງຄົມໃຫ້ໄປຕາມກົດໝາຍ, ຕາມຫຼັກການ ເດັດຂາດ, ໂປ່ງໃສ ແລະ ມີອາຊີບ, ໃຫ້ມີຜົນສັກສິດ, ມີປະສິດທິພາບ, ປະສິດທິຜົນສູງ ແລະ ມີຄວາມເຂັ້ມງວດ; ເອົາໃຈໃສ່ ປະຕິບັດວຽກງານ 3 ສ້າງ ຕິດພັນກັບ ຂະບວນການ ແຂ່ງຂັນຮັກຊາດ ແລະ ພັດທະນາ ໃຫ້ມີຈຸດສຸມ, ມີການແບ່ງຂັ້ນຄຸ້ມຄອງ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຢ່າງຈະແຈ້ງ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ອົງການປົກຄອງ ຂັ້ນທ້ອງຖິ່ນ ມີຄວາມເປັນເຈົ້າການຫຼາຍຂຶ້ນ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ລັດຖະບານຊີ້ນໍາບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກ ຂັ້ນຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ ແລະ ລາຍງານຜົນການຈັດຕັ້ງປະຕິບັດໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;
2. ມອບໃຫ້ ຄະນະປະຈໍາສະພາແຫ່ງຊາດ, ກໍາມາທິການແຜນການ, ການເງິນ ແລະ ການກວດສອບ, ບັນດາກໍາມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດໍາເນີນການຕິດຕາມ-ກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**